# ບົດຂ່າວ

## ພິທີເຊັນສັນຍາ

**ວ່າດ້ວຍການພັດທະນາລະບົບການຈັດເກັບອາກອນມູນຄ່າເພີ່ມ, ເຄື່ອງຕິດຕົວຜູ້ໂດຍສານຂາເຂົ້າ ແລະ ລະບົບຈັດເກັບຄ່າທຳນຽມຜູ້ໂດຍສານ, ພາຫະນະເຂົ້າ-ອອກ ທີ່ດ່ານພາສີສາກົນຂົວມິດຕະພາບ 1 ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ກົມພາສີອາກອນ, ກະຊວງການເງິນ.**

ທີ່ນະຄອນຫຼວງວຽງຈັນ, ວັນ 19/09/2017




ໃນວັນທີ 19 ກັນຍາ 2017 ເວລາ 9:00 ໂມງ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ກົມພາສີອາກອນ, ກະຊວງການເງິນ ໄດ້ຈັດພິທີເຊັນສັນຍາຮ່ວມກັນ ວ່າດ້ວຍການພັດທະນາລະບົບການຈັດເກັບອາກອນມູນຄ່າເພີ່ມ, ເຄື່ອງຕິດຕົວຜູ້ໂດຍສານຂາເຂົ້າ ແລະ ລະບົບຈັດເກັບຄ່າທຳນຽມຜູ້ໂດຍສານ, ພາຫະນະເຂົ້າ-ອອກ ທີ່ດ່ານພາສີສາກົນຂົວມິດຕະພາບ 1.

ໃນພິທີເຊັນສັນຍາຄັ້ງນີ້ ແມ່ນລົງນາມໂດຍ: ທ່ານ ພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ແລະ ທ່ານ ບຸນປະເສີດ ສີກຸນລະບຸດ, ຮັກສາການຫົວໜ້າກົມພາສີ, ກະຊວງການເງິນ.

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ:

1. ທ່ານ ສົມບູນ ອິນທະປັດຖາ, ຫົວໜ້າຫ້ອງການກະຊວງການເງິນ
2. ທ່ານ ບັນທະລາດ ແກ້ວປະເສີດ, ຮອງຜູ້ອຳນວຍການ ທຄຕລ.

ພ້ອມດ້ວຍ, ຄະນະພະແນກ, ຄະນະສາຂາ, ວິຊາການທີ່ກ່ຽວຂ້ອງ ຂອງ ທຄຕລ ແລະ ຄະນະຜູ້ແທນຈາກ ກົມພາສີອາກອນ ກະຊວງການເງິນ.

ທຄຕລ ແລະ ກົມພາສີອາກອນ ກະຊວງການເງິນ ໄດ້ມີການຮ່ວມມືເພື່ອລິເລີ່ມການທົດລອງໃຫ້ບໍລິການການຊໍາລະຄ່າອາກອນມູນຄ່າເພີ່ມຜ່ານລະບົບທະນາຄານ ຕັ້ງແຕ່ປີ ເດືອນ ພະຈິກ 2016 ທີ່ຜ່ານມາ ເພື່ອອໍານວຍຄວາມສະດວກໃຫ້ແກ່ພໍ່ແມ່ນພີ່ນ້ອງປະຊາຊົນ ແລະ ບັນດາບໍລິສັດຫ້າງຮ້ານຕ່າງໆໃຫ້ສາມາດຊໍາລະຄ່າອາກອນມູນລະຄ່າເພີ່ມໂດຍສະເພາະການນໍາເຂົ້າສິນຄ້າຜ່ານດ້ານພາສີສາກົນຂົວມິດຕະພາບ 1 ຜ່ານລະບົບຂອງ ທຄຕລ.




ຜ່ານການທົດລອງນໍາໃຊ້ລະບົບການຈັດເກັບອາກອນມູນຄ່າເພີ່ມດັ່ງກ່າວໃນໄລຍະ 10 ເດືອນຜ່ານມາ ເຫັນວ່າການໃຫ້ບໍລິການດັ່ງກ່າວມີປະສິດທິພາບ, ປະສິດທິຜົນ ແລະ ໄດ້ຮັບການຕອບຮັບດີພໍສົມຄວນ ເຊິ່ງສະແດງອອກຄື: ສາມາດເກັບກໍາລາຍການຊໍາລະຄ່າອາກອນມູນຄ່າເພີ່ມຂອງຜູ້ຊົມໃຊ້ໄດ້ລະອຽດຂຶ້ນ ເຊິ່ງເປັນການຊ່ວຍທາງກົມພາສີໃນການປ້ອງກັນການຮົ່ວໄຫລຂອງອາກອນ. ຜູ້ຊົມໃຊ້ ຫລື ຜູ້ເສຍຄ່າພາສີອາກອນມູນຄ່າເພີ່ມ ສາມາດມີທາງເລືອກໃນການຊໍາລະອາກອນມູນຄ່າເພີ່ມໄດ້ງ່າຍຂຶ້ນເຊັ່ນ: ຜ່ານທາງ BCEL One ແລະ ຜ່ານບັດສະມາດແວັດ (SMART VAT Card) ເຊິ່ງສະດວກສະບາຍ ແລະ ໄວກວ່າການໃຊ້ແບບຟອມແຈ້ງແບບດັ່ງເດີມ ເພາະໄດ້ຫັນມາຊໍາລະຜ່ານລະບົບອີເລັກໂທນິກ.

ທ່ານ ພູຂົງ ຈັນທະຈັກ, ຜູ້ອໍານວຍການໃຫຍ່ ທຄຕລ ໄດ້ກ່າວໃນພິທີເຊັນສັນຍາວ່າ: ຫຼັງຈາກສໍາເລັດໄລຍະການທົດລອງໂຄງການ, ທຄຕລ ກໍ່ມີຄວາມຮູ້ສຶກດີໃຈ ທີ່ທາງກົມພາສີອາກອນ ໄດ້ມີການມອບໝາຍໃຫ້ ທຄຕລ ຊ່ວຍໃນການເກັບຄ່າທໍານຽມພາຫະນະ ແລະ ບຸກຄົນດ້ານຂາເຂົ້າ ແລະ ຂາອອກ ທີ່ຜ່ານດ້ານພາສີສາກົນຂົວມິດຕະພາບ 1, ທຄຕລ ເອງກໍ່ຈະປະຕິບັດໜ້າທີ່ ແລະ ໃຫ້ບໍລິການດີທີ່ສຸດ. ເຖິງຢ່າງໃດກໍ່ຕາມ, ຜະລິດຕະພັນການຊໍາລະຄ່າອາກອນມູນຄ່າເພີ່ມແມ່ນຖືວ່າເປັນຂັ້ນຕອນໃໝ່ ແລະ ຜະລິດຕະພັນໃໝ່ ກໍ່ຍັງຄົງພົບຂໍ້ຫຍຸ້ງຍາກໃນການປະຕິບັດ ແລະ ນໍາໃຊ້ລະບົບເຊັ່ນ: 1. ມວນຊົນທົ່ວໄປຍັງບໍ່ທັນຮູ້ຈັກກ່ຽວກັບການໃຫ້ບໍລິການດັ່ງກ່າວເທົ່າທີ່ຄວນ, 2. ການໂຄສະນາປະຊາສໍາພັນ

ຜະລິດຕະພັນດັ່ງກ່າວແມ່ນຍັງບໍ່ທັນກວ້າງຂວາງເທື່ອ ແລະ 3. ດ້ານເຈົ້າໜ້າທີ່ເອງ ກໍ່ກໍາລັງທໍາຄວາມຄຸ້ນເຄີຍກັບລະບົບ, ເຊິ່ງໃນເບື້ອງຕົ້ນການໃຫ້ບໍລິການ ກໍ່ອາດຈະຍັງບໍ່ທັນຄ່ອງແຂ້ວເທົ່າທີ່ຄວນ. ສະນັ້ນ, ຈິ່ງຂໍຝາກເຖິງບັນດາຜູ້ຊົມໃຊ້ບໍລິການ ໃຫ້ຄວາມຮ່ວມມື ແລະ ເຊື່ອໝັ້ນຕໍ່ການບໍລິການຂອງພວກເຮົາດ້ວຍ. ທຄຕລ ເຊື່ອແນ່ວ່າ, ການບໍລິການຈະນັບມື້ນັບພັດທະນາ ໃຫ້ດີຂຶ້ນກວ່າເກົ່າໃນອະນາຄົດ.

ການໃຫ້ບໍລິການຕາມສັນຍາສະບັບທີ່ເຊັນໃນຄັ້ງນີ້ ແມ່ນຈະກວມເອົາການໃຫ້ບໍລິການໃນ 2 ວຽກງານຄື: 1. ລະບົບການຈັດເກັບອາກອນມູນຄ່າເພີ່ມສໍາລັບເຄື່ອງຂອງຕິດຕົວຜູ້ໂດຍສານຂາເຂົ້າໃນອັດຕາສ່ວນ 10% ແລະ 2. ລະບົບການຈັດເກັບຄ່າທໍານຽມຜູ້ໂດຍສານ, ພາຫະນະເຂົ້າ-ອອກ ທີ່ດ່ານພາສີສາກົນຂົວມິດຕະພາບ 1, ຫຼັງຈາກ ການນໍາໃຊ້ລະບົບດັ່ງກ່າວຄາດວ່າ ຈະສາມາດອໍານວຍຄວາມສະດວກໃຫ້ແກ່ເຈົ້າໜ້າທີ່ ແລະ ຜູ້ໂດຍສານ ໃຫ້ໄດ້ຮັບຄວາມສະດວກສະບາຍຍິ່ງຂຶ້ນ.